# ສະບາຍດີປີໃໝ່

# HAPPY NEW YEAR



## ຄ.ສ 2015 ພ.ສ 2558

ຈຸດປະສົງໃນການຜະລິດປະຕິທິນ ແມ່ນໃຊ້ສຳລັບເຜີຍແຜ່ຂໍ້ມູນພື້ນຖານທາງດ້ານກົດໝາຍ ໂດຍອີງໃສ່ນິຕິກຳຕ່າງໆ
ເພື່ອສົ່ງເສີມ ໃຫ້ປະຊາຊົນ ແລະ ທຸກພາກສ່ວນ ໄດ້ມີສ່ວນຮ່ວມໃນການພັດທະນາແບບຍືນຍົງ.

ຮ່ວມຜະລິດໂດຍ

MONRE · NAFRI · LIWG Land Issues Working Group · Village Focus International · CIDSE · JVC Japan International Volunteer Center · care · GAPE · PADETC

# ການນຳໃຊ້ທີ່ດິນເພື່ອການຄ້ຳປະກັນດ້ານສະບຽງອາຫານ




## ມັງກອນ ພສ ໒໕໕໘ 1 ຄສ 2015 JANUARY

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | 1 ຂ.12 ດ.2 | 2 ຂ.13 ດ.2 | 3 ຂ.14 ດ.2 |
| 4 ຂ.15 ດ.2 | 5 ແ.1 ດ.2 | 6 ແ.2 ດ.2 | 7 ແ.3 ດ.2 | 8 ແ.4 ດ.2 | 9 ແ.5 ດ.2 | 10 ແ.6 ດ.2 |
| 11 ແ.7 ດ.2 | 12 ແ.8 ດ.2 | 13 ແ.9 ດ.2 | 14 ແ.10 ດ.2 | 15 ແ.11 ດ.2 | 16 ແ.12 ດ.2 | 17 ແ.13 ດ.2 |
| 18 ແ.14 ດ.2 | 19 ແ.15 ດ.2 | 20 ຂ.1 ດ.3 | 21 ຂ.2 ດ.3 | 22 ຂ.3 ດ.3 | 23 ຂ.4 ດ.3 | 24 ຂ.5 ດ.3 |
| 25 ຂ.6 ດ.3 | 26 ຂ.7 ດ.3 | 27 ຂ.8 ດ.3 | 28 ຂ.9 ດ.3 | 29 ຂ.10 ດ.3 | 30 ຂ.11 ດ.3 | 31 ຂ.12 ດ.3 |

1. ປີໃໝ່ສາກົນ

20. ວັນສ້າງຕັ້ງກອງທັບປະຊາຊົນລາວ

## ກຸມພາ ພສ ໒໕໕໘ 2 ຄສ 2015 FEBRUARY

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| 1 ຂ.13 ດ.3 | 2 ຂ.14 ດ.3 | 3 ຂ.15 ດ.3 | 4 ແ.1 ດ.3 | 5 ແ.2 ດ.3 | 6 ແ.3 ດ.3 | 7 ແ.4 ດ.3 |
| 8 ແ.5 ດ.3 | 9 ແ.6 ດ.3 | 10 ແ.7 ດ.3 | 11 ແ.8 ດ.3 | 12 ແ.9 ດ.3 | 13 ແ.10 ດ.3 | 14 ແ.11 ດ.3 |
| 15 ແ.12 ດ.3 | 16 ແ.13 ດ.3 | 17 ແ.14 ດ.3 | 18 ຂ.1 ດ.4 | 19 ຂ.2 ດ.4 | 20 ຂ.3 ດ.4 | 21 ຂ.4 ດ.4 |
| 22 ຂ.5 ດ.4 | 23 ຂ.6 ດ.4 | 24 ຂ.7 ດ.4 | 25 ຂ.8 ດ.4 | 26 ຂ.9 ດ.4 | 27 ຂ.10 ດ.4 | 28 ຂ.11 ດ.4 |

1. ວັນສ້າງຕັ້ງກຳມະບານລາວ

3. ວັນບຸນມາຂະບູຊາ, ບຸນພະທາດສີໂຄດຕະບອງ ແຂວງຄຳມ່ວນ ແລະ ວັດພູຈຳປາສັກ

## ກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003

### ມາດຕາ 17 (ໃໝ່). ການກຳນົດຂອບເຂດການນຳໃຊ້ທີ່ດິນກະສິກຳ

**ລັດອະນຸຍາດໃຫ້ບຸກຄົນ ແລະ ຄອບຄົວນຳໃຊ້ທີ່ດິນກະສິກຳຢ່າງຖືກຕ້ອງຕາມແຜນຈັດສັນ, ຕາມເປົ້າໝາຍ, ຍາວນານ ແລະ ມີປະສິດທິຜົນ ຕາມຈຳນວນເນື້ອທີ່ດັ່ງນີ້:**

- ຜູ້ທີ່ປູກເຂົ້າ, ລ້ຽງສັດໃນຈຳນວນສູງສຸດບໍ່ເກີນ ໜຶ່ງ ເຮັກຕາ ຕໍ່ໜຶ່ງແຮງງານໃນຄອບຄົວ;
- ຜູ້ທີ່ເຮັດສວນປູກພືດອຸດສາຫະກຳ ແລະ ພືດລົ້ມລຸກໃນຈຳນວນສູງສຸດບໍ່ເກີນ ສາມ ເຮັກຕາ ຕໍ່ໜຶ່ງແຮງງານໃນຄອບຄົວ;
- ຜູ້ທີ່ເຮັດສວນປູກຕົ້ນໄມ້ໃຫ້ໝາກ ໃນຈຳນວນສູງສຸດບໍ່ເກີນ ສາມ ເຮັກຕາ ຕໍ່ໜຶ່ງແຮງງານໃນຄອບຄົວ;
- ຜູ້ທີ່ນຳໃຊ້ທີ່ດິນປອກໂລ້ນ ຫຼື ປ່າຫຍ້າປະເພດຕ່າງໆ ຊຶ່ງທັນມາປູກພືດພັນຫຍ້າລ້ຽງສັດ ໃນຈຳນວນສູງສຸດບໍ່ ເກີນ ສິບຫ້າ ເຮັກຕາ ຕໍ່ໜຶ່ງແຮງງານໃນຄອບຄົວ.

## ບົດແນະນຳຕາມຄວາມສະໝັກໃຈ ກ່ຽວກັບການບໍລິຫານສິດຄອບຄອງນຳໃຊ້ຢ່າງມີຄວາມຮັບຜິດຊອບໃນເລື່ອງ ທີ່ດິນ, ການປະມົງ ແລະ ປ່າໄມ້ ໂດຍ ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ຈັດພິມຮ່ວມກັບ ອົງການອາຫານ ແລະ ການກະເສດ ແຫ່ງ ສະຫະປະຊາຊາດ, ປີ 2012

### ຂໍ້ 12. ການລົງທຶນ

12.12 ຜູ້ລົງທຶນ ມີຄວາມຮັບຜິດຊອບໃນການເຄົາລົບກົດໝາຍ ແລະ ນິຕິກຳຂອງຊາດ ພ້ອມທັງຮັບຮູ້ ແລະ ເຄົາລົບສິດຄອບຄອງນຳໃຊ້ຂອງຜູ້ອື່ນ ແລະ ຫຼັກນິຕິທຳທີ່ສອດຄ່ອງກັບຫຼັກການລວມ ສຳລັບພາກສ່ວນທີ່ບໍ່ແມ່ນລັດ ດັ່ງທີ່ໄດ້ລະບຸໄວ້ໃນບົດແນະນຳສະບັບນີ້. ການລົງທຶນຄວນບໍ່ມີສ່ວນສ້າງຄວາມບໍ່ໝັ້ນຄົງທາງດ້ານ ສະບຽງອາຫານ ແລະ ທຳລາຍສິ່ງແວດລ້ອມ.

ຮ່ວມສະໜັບສະໜູນໂດຍ

# ຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ໃນຂະບວນການພັດທະນາ













**ມີນາ ພສ ໒໕໕໘ 3 ຄສ 2015 MARCH**

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 |
| 8 | 9 | 10 | 11 | 12 | 13 | 14 |
| 15 | 16 | 17 | 18 | 19 | 20 | 21 |
| 22 | 23 | 24 | 25 | 26 | 27 | 28 |
| 29 | 30 | 31 | | | | |

8. ວັນແມ່ຍິງສາກົນ
22. ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ

**ເມສາ ພສ ໒໕໕໘ 4 ຄສ 2015 APRIL**

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | 1 | 2 | 3 | 4 |
| 5 | 6 | 7 | 8 | 9 | 10 | 11 |
| 12 | 13 | 14 | 15 | 16 | 17 | 18 |
| 19 | 20 | 21 | 22 | 23 | 24 | 25 |
| 26 | 27 | 28 | 29 | 30 | | |

14. ວັນສັງຂານລ່ວງ
15. ວັນເນົາ
16. ວັນສັງຂານຂຶ້ນ

## ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະບັບ ປີ 2003

ມາດຕາ 17. ລັດປົກປ້ອງສິດ ກ່ຽວກັບກຳມະສິດ (ສິດຄອບຄອງ, ສິດນຳໃຊ້, ສິດໄດ້ຮັບໝາກຜົນ, ສິດຊີ້ຂາດ) ແລະ ສິດສືບທອດຊັບສົມບັດຂອງການຈັດຕັ້ງ ແລະຂອງບຸກຄົນ. ສຳລັບທີ່ດິນແມ່ນເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ, ລັດຮັບປະກັນສິດນຳໃຊ້, ສິດໂອນ ແລະ ສິດສືບທອດຕາມກົດໝາຍ.

ມາດຕາ 37. ພົນລະເມືອງລາວຍິງ-ຊາຍ ມີສິດເທົ່າທຽມກັນໃນດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ.

## ສົນທິສັນຍາ ວ່າດ້ວຍການກຳຈັດການຈຳແນກແມ່ຍິງ ໃນທຸກຮູບການ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລົງນາມ: 17 ກໍລະກົດ 1980 ໃຫ້ສັດຕະຍາບັນ 14 ສິງຫາ 1981

ມາດຕາ 3. ລັດພາຄີ ຈະຕ້ອງເອົາທຸກມາດຕະການທີ່ເໝາະສົມ ໃນທຸກດ້ານ, ໂດຍສະເພາະແລ້ວ ແມ່ນດ້ານການເມືອງ, ສັງຄົມ, ເສດຖະກິດ ແລະ ວັດທະນະທຳ ລວມທັງມາດຕະການດ້ານນິຕິບັນຍັດ ເພື່ອຮັບປະກັນການພັດທະນາ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ຢ່າງເຕັມສ່ວນ, ເພື່ອຄ້ຳປະກັນ ໃຫ້ເຂົາເຈົ້າໄດ້ປະຕິບັດ ແລະ ຊົມໃຊ້ສິດທິມະນຸດ ແລະ ອິດສະລະພາບ ບົນພື້ນຖານຄວາມສະເໝີພາບ ກັບເພດຊາຍ.

ຮ່ວມສະໜັບສະໜູນໂດຍ

# ບົດບາດ ແລະ ໜ້າທີ່ ຂອງແຕ່ລະພາກສ່ວນໃນໂຄງການພັດທະນາ


ການມີສ່ວນຮ່ວມຕໍ່ການສະເໜີໂຄງການ


ກອງປະຊຸມພິຈາລະນາຜົນກະທົບຂອງໂຄງການ


ການຝຶກອົບຮົມວິຊາການ


ການສົ່ງເສີມອາຊີບ

**ພຶດສະພາ ພສ ໒໕໕໘ 5 ຄສ 2015 MAY**

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | | 1 | 2 |
| 3 | 4 | 5 | 6 | 7 | 8 | 9 |
| 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 |
| 24 | 25 | 26 | 27 | 28 | 29 | 30 |
| 31 | | | | | | |

1. ວັນກຳມະກອນສາກົນ
2. ວັນບຸນວິສາຂະບູຊາ

**ມິຖຸນາ ພສ ໒໕໕໘ 6 ຄສ 2015 JUNE**

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | 1 | 2 | 3 | 4 | 5 | 6 |
| 7 | 8 | 9 | 10 | 11 | 12 | 13 |
| 14 | 15 | 16 | 17 | 18 | 19 | 20 |
| 22 | 22 | 23 | 24 | 25 | 26 | 27 |
| 28 | 29 | 30 | | | | |

1. ວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ

## ບົດແນະນຳວ່າດ້ວຍ ການມີສ່ວນຮ່ວມຂອງມວນຊົນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການລົງທຶນ ສະບັບເລກທີ 707/ກຊສ, ລົງວັນທີ 5 ກຸມພາ 2013

ຂໍ້ 2. ການມີສ່ວນຮ່ວມຂອງມວນຊົນໃນໄລຍະກໍ່ສ້າງ ແລະ ດຳເນີນໂຄງການ ຫຼື ຂຸດຄົ້ນ-ປຸງແຕ່ງແຮ່ທາດ

ຂໍ້ ຄ. ການສະແດງຄວາມຄິດເຫັນ

**1) ປະຊາຊົນ ຫຼື ກຸ່ມຄົນ** (ຊາວໜຸ່ມ, ແມ່ຍິງ, ຊົນເຜົ່າ ຜູ້ທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້) ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ສາມາດສະແດງຄຳຄິດເຫັນ ກ່ຽວກັບ ການຈັດຕັ້ງປະຕິບັດໂຄງການລົງທຶນ ດ້ວຍຫຼາຍຮູບແບບ ເຊັ່ນ:

- ສົ່ງຄຳຄິດເຫັນໄປໃຫ້ຜູ້ພັດທະນາໂຄງການ ຫຼື ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງໂດຍຜ່ານທາງອີເມວ, ໄປສະນີ ແລະອື່ນໆ;
- ສົ່ງຄຳຮ້ອງທຸກ-ຮ້ອງຟ້ອງ ກ່ຽວກັບຜົນການຈັດປະຕິບັດໂຄງການລົງທຶນ ທີ່ເຫັນວ່າບໍ່ຖືກຕ້ອງ ແລະ ບໍ່ເປັນທຳ ບົນພື້ນຖານລະບຽບກົດໝາຍໄປຍັງຜູ້ພັດທະນາໂຄງການ ແລະ ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ.

**2) ຜູ້ພັດທະນາໂຄງການ:** ຕ້ອງສ້າງກົນໄກ ເພື່ອຮັບຄຳຄິດເຫັນ, ຄຳຮ້ອງທຸກ-ຮ້ອງຟ້ອງ ຂອງປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ພ້ອມທັງຫາມາດຕະການແກ້ໄຂ ແລະ ແຈ້ງໄປຍັງປະຊາຊົນ ແລະ ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງຮັບຊາບ.

**3) ອົງການຈັດຕັ້ງຂອງລັດ:** ຕ້ອງມີໜ່ວຍງານໄກ່ເກ່ຍຂໍ້ຂັດແຍ່ງ ເພື່ອຮັບຄຳຄິດເຫັນ, ຄຳຮ້ອງທຸກ-ຮ້ອງຟ້ອງ ຂອງປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ພ້ອມທັງຫາມາດຕະການແກ້ໄຂ ດ້ວຍຄວາມ ຖືກຕ້ອງ, ໂປ່ງໃສ ແລະ ເປັນທຳ ໃຫ້ແກ່ປະຊາຊົນ.

## ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009

ມາດຕາ 69. ພັນທະຂອງຜູ້ລົງທຶນ

ຂໍ້ 3. ປະຕິບັດລະບອບ ປະກັນໄພ ແລະ ປະກັນສັງຄົມ ຕໍ່ຜູ້ອອກແຮງງານໃນວິສາຫະກິດ ຂອງຕົນ ຕາມລະບຽບກົດໝາຍ, ສົ່ງເສີມການນຳໃຊ້ແຮງງານລາວ, ເອົາໃຈໃສ່ໃນການພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຢີໃຫ້ແກ່ຜູ້ອອກແຮງງານລາວ.

ຮ່ວມສະໜັບສະໜູນໂດຍ

# ການມີສ່ວນຮ່ວມຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ


ການເຜີຍແຜ່ຂໍ້ມູນຂອງໂຄງການ


ການປຶກສາຫາລືໃນການເລືອກພື້ນທີ່ຈັດສັນໃໝ່


ພື້ນທີ່ຈັດສັນໃໝ່


ພື້ນທີ່ບ້ານເກົ່າ

## ກໍລະກົດ ພສ ໒໕໕໘ 7 ຄສ 2015 JULY

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | 1 | 2 | 3 | 4 |
| 5 | 6 | 7 | 8 | 9 | 10 | 11 |
| 12 | 13 | 14 | 15 | 16 | 17 | 18 |
| 19 | 20 | 21 | 22 | 23 | 24 | 25 |
| 26 | 27 | 28 | 29 | 30 | 31 | |

13. ວັນລັດຍວັນເກີດ ປະທານ ສຸພານຸວົງ
20. ວັນສ້າງຕັ້ງສະຫະພັນແມ່ຍິງລາວ
30. ວັນບຸນເຂົ້າພັນສາ

## ສິງຫາ ພສ ໒໕໕໘ 8 ຄສ 2015 AUGUST

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | | | 1 |
| 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 |
| 16 | 17 | 18 | 19 | 20 | 21 | 22 |
| 23 | 24 | 25 | 26 | 27 | 28 | 29 |
| 30 | 31 | | | | | |

15. ວັນປະກາດໂຊ້ສິດຕະຫຼອດບຸນ
23. ວັນຍຶດອຳນາດທົ່ວປະເທດ

## ຄຳແນະນຳ ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ສະບັບເລກທີ 8030/ກຊສ, ລົງວັນທີ 17 ທັນວາ 2013

**ຂໍ້ 2.14. ການມີສ່ວນຮ່ວມຂອງ ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນ**

- ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ແຜນການພັດທະນາໂຄງການລົງທຶນ ແລະ ກິດຈະການຕ່າງໆ, ຜົນປະໂຫຍດທີ່ຈະໄດ້ຮັບ, ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ທີ່ຈະເກີດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ;
- ເຂົ້າຮ່ວມລົງກວດກາພາກສະໜາມ ພ້ອມທັງເປັນເຈົ້າການ ເຂົ້າຮ່ວມກອງປະຊຸມປຶກສາໃນຂັ້ນຕ່າງໆ ເພື່ອປະກອບຄຳເຫັນຕໍ່ການສ້າງ ແລະ ທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ບປຜສ);
- ສະເໜີເປັນລາຍລັກອັກສອນ ຕໍ່ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ເພື່ອດຳເນີນການແກ້ໄຂບັນຫາ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ.

## ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ), ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012

**ມາດຕາ 70 (ໃໝ່). ຂໍ້ຫ້າມສຳລັບຜູ້ປະກອບການ**

**ຫ້າມຜູ້ປະກອບການມີພຶດຕິກຳ ດັ່ງນີ້:**

1. ດຳເນີນທຸລະກິດທີ່ສ້າງຜົນກະທົບທາງລົບເກີນມາດຕະຖານ ຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;
2. ດຳເນີນທຸລະກິດໃດໜຶ່ງ ທີ່ສົ່ງກິ່ນເໝັນ, ສຽງດັງ, ປ່ອຍຄວັນ ເກີນມາດຕະຖານທີ່ໄດ້ກຳນົດໄວ້;
3. ດຳເນີນໂຄງການ, ກິດຈະການ ແລະ ໃຫ້ບໍລິການດ້ານວິຊາການ ກ່ຽວກັບສິ່ງແວດລ້ອມ ໂດຍບໍ່ສອດຄ່ອງ ກັບການອະນຸຍາດ ແລະ ການຢັ້ງຢືນ;
4. ຫຼີກຫຼ່ຽງການປະຕິບັດພັນທະ;
5. ປອມແປງເອກະສານ, ໃຫ້ຂໍ້ມູນຂ່າວສານບໍ່ຖືກກັບຄວາມເປັນຈິງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ລະບຽບກົດໝາຍ.

## ດຳລັດ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການພັດທະນາ ສະບັບເລກທີ 192/ນຍ, ລົງວັນທີ 7 ກໍລະກົດ 2005

**ມາດຕາ 3. ຄຳນິຍາມ**

ຂໍ້ 6. ການຟື້ນຟູຊີວິດການເປັນຢູ່ ໝາຍເຖິງການຊ່ວຍເຫຼືອປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບໜັກໜ່ວງ ຍ້ອນການສູນເສຍຊັບສິນເພື່ອທຳການຜະລິດ, ການສ້າງລາຍຮັບ, ວຽກເຮັດງານທຳ ຫຼື ພື້ນຖານການດຳລົງຊີວິດ ຊຶ່ງຕ້ອງມີການທົດແທນຄ່າເສຍຫາຍໃຫ້ແກ່ ຊັບສິນທີ່ໄດ້ມີການເວນຄືນ ເພື່ອປັບປຸງມາດຕະຖານຊີວິດການເປັນຢູ່ໃຫ້ດີຂຶ້ນກວ່າເກົ່າ ຫຼື ຢ່າງໜ້ອຍແມ່ນຟື້ນຟູຊີວິດການເປັນຢູ່ ຂອງພວກເຂົາເຈົ້າໃຫ້ເທົ່າກັບລະດັບກ່ອນເວລາໂຄງການເກີດຂຶ້ນ.

ຮ່ວມສະໜັບສະໜູນໂດຍ

# ສິ່ງທີ່ຄວນເອົາໃຈໃສ່ໃນການເຮັດສັນຍາ



ສັນຍາຕ້ອງເຮັດຂຶ້ນບົນພື້ນຖານຄວາມສະໝັກໃຈຂອງຄູ່ສັນຍາ ແລະ ຕ້ອງໃຫ້ສອດຄ່ອງກັບການກຳນົດຂອງກົດໝາຍ




ຖ້າວ່າ ຄູ່ກໍລະນີ ຫາກບໍ່ສາມາດຕົກລົງກັນໄດ້ ກໍມີສິດສະເໜີຕໍ່ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຫຼື ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ

## ກັນຍາ ພສ ໒໕໕໘ 9 ຄສ 2015 SEPTEMBER

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | 1 | 2 | 3 | 4 | 5 |
| 6 | 7 | 8 | 9 | 10 | 11 | 12 |
| 13 | 14 | 15 | 16 | 17 | 18 | 19 |
| 20 | 21 | 22 | 23 | 24 | 25 | 26 |
| 27 | 28 | 29 | 30 | | | |

12. ວັນບຸນຫໍ່ເຂົ້າປະດັບດິນ
27. ວັນບຸນຫໍ່ເຂົ້າສະຫຼາກ

## ຕຸລາ ພສ ໒໕໕໘ 10 ຄສ 2015 OCTOBER

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | 1 | 2 | 3 |
| 4 | 5 | 6 | 7 | 8 | 9 | 10 |
| 11 | 12 | 13 | 14 | 15 | 16 | 17 |
| 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | 31 |

7. ວັນຄູແຫ່ງຊາດ
12. ວັນປະກາດເອກະລາດ
27. ວັນບຸນອອກພັນສາ
28. ວັນບຸນຊ່ວງເຮືອນະຄອນຫຼວງວຽງຈັນ

## ກົດໝາຍວ່າດ້ວຍ ຂໍ້ຜູກພັນໃນ ແລະ ນອກສັນຍາ ສະບັບເລກທີ 01/ສພຊ, ລົງວັນທີ 8 ທັນວາ 2008

### ມາດຕາ 16 (ປັບປຸງ). ເນື້ອໃນຂອງສັນຍາ

ສັນຍາ ອາດຈະປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

- ຊື່, ນາມສະກຸນ ແລະ ບ່ອນຢູ່ ຂອງຄູ່ສັນຍາ;
- ວັດຖຸປະສົງ, ລາຄາ, ກຳນົດເວລາປະຕິບັດ, ການຊຳລະ, ການນຳສົ່ງ;
- ຂອບເຂດ, ປະລິມານ ແລະ ຄຸນນະພາບ ຂອງເປົ້າໝາຍ;
- ສະຖານທີ່ຂອງການປະຕິບັດສັນຍາ ແລະ ພັນທະໃນການແຈ້ງໃຫ້ແກ່ກັນຊາບ;
- ຜົນສະທ້ອນຂອງການລະເມີດສັນຍາ;
- ຮູບການ ແລະ ອົງການແກ້ໄຂຂໍ້ຂັດແຍ່ງ;
- ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດ ສັນຍາກ່ອນກຳນົດ.

ວັດຖຸປະສົງ, ລາຄາ, ກຳນົດເວລາປະຕິບັດ ແມ່ນເນື້ອໃນອັນຈຳເປັນສຳລັບສັນຍາທຸກປະເພດ.

### ມາດຕາ 33. ຜົນສະທ້ອນຂອງການລະເມີດສັນຍາ

ຖ້າວ່າຄູ່ສັນຍາຝ່າຍໃດໜຶ່ງ ຫາກໄດ້ລະເມີດສັນຍາ ຝ່າຍນັ້ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍທີ່ເກີດຂຶ້ນ ເວັ້ນເສັຍແຕ່ການລະເມີດສັນຍານັ້ນ ຫາກເກີດຂຶ້ນຍ້ອນເຫດສຸດວິໄສ.

### ມາດຕາ 101 (ປັບປຸງ). ວິທີແກ້ໄຂຂໍ້ຂັດແຍ່ງ

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບການປະຕິບັດສັນຍາ ແລະ ການຮ້ອງຂໍເອົາການໃຊ້ແທນຄ່າເສັຍຫາຍ ຄູ່ກໍລະນີ ອາດຈະຊອກວິທີແກ້ໄຂຂໍ້ຂັດແຍ່ງດ້ວຍຕົນເອງ ຫຼື ປະນີປະນອມກັນ. ຖ້າວ່າ ຄູ່ກໍລະນີ ຫາກບໍ່ສາມາດຕົກລົງກັນໄດ້ ກໍມີສິດສະເໜີຕໍ່ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຫຼື ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາແກ້ໄຂ ຕາມລະບຽບກົດໝາຍ.

ຮ່ວມສະໜັບສະໜູນໂດຍ

# ພາລະບົດບາດຂອງບ້ານໃນການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້




**ພະຈິກ ພສ ໒໕໕໘ 11 ຄສ 2015 NOVEMBER**

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| 1 ຮ.5ດ.11 | 2 ຮ.6ດ.11 | 3 ຮ.7ດ.11 | 4 ຮ.8ດ.11 | 5 ຮ.9ດ.11 | 6 ຮ.10ດ.11 | 7 ຮ.11ດ.11 |
| 8 ຮ.12ດ.11 | 9 ຮ.13ດ.11 | 10 ຮ.14ດ.11 | 11 ຂ.1ດ.12 | 12 ຂ.2ດ.12 | 13 ຂ.3ດ.12 | 14 ຂ.4ດ.12 |
| 15 ຂ.5ດ.12 | 16 ຂ.6ດ.12 | 17 ຂ.7ດ.12 | 18 ຂ.8ດ.12 | 19 ຂ.9ດ.12 | 20 ຂ.10ດ.12 | 21 ຂ.11ດ.12 |
| 22 ຂ.12ດ.12 | 23 ຂ.13ດ.12 | 24 ຂ.14ດ.12 | 25 ຂ.15ດ.12 | 26 ຮ.1ດ.12 | 27 ຮ.2ດ.12 | 28 ຮ.3ດ.12 |
| 29 ຮ.4ດ.12 | 30 ຮ.5ດ.12 | | | | | |

25. ວັນບຸນພະທາດຫຼວງ

**ທັນວາ ພສ ໒໕໕໘ 12 ຄສ 2015 DECEMBER**

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | 1 ຮ.6ດ.12 | 2 ຮ.7ດ.12 | 3 ຮ.8ດ.12 | 4 ຮ.9ດ.12 | 5 ຮ.10ດ.12 |
| 6 ຮ.11ດ.12 | 7 ຮ.12ດ.12 | 8 ຮ.13ດ.12 | 9 ຮ.14ດ.12 | 10 ຮ.15ດ.12 | 11 ຂ.1ດ.1 | 12 ຂ.2ດ.1 |
| 13 ຂ.3ດ.1 | 14 ຂ.4ດ.1 | 15 ຂ.5ດ.1 | 16 ຂ.6ດ.1 | 17 ຂ.7ດ.1 | 18 ຂ.8ດ.1 | 19 ຂ.9ດ.1 |
| 20 ຂ.10ດ.1 | 21 ຂ.11ດ.1 | 22 ຂ.12ດ.1 | 23 ຂ.13ດ.1 | 24 ຂ.14ດ.1 | 25 ຂ.15ດ.1 | 26 ຮ.1ດ.1 |
| 27 ຮ.2ດ.1 | 28 ຮ.3ດ.1 | 29 ຮ.4ດ.1 | 30 ຮ.5ດ.1 | 31 ຮ.6ດ.1 | | |

2. ວັນສະຖາປະນາ ສປປ ລາວ
13. ວັນຄ້າຍວັນເກີດ ປະທານ ໄກສອນ ພົມວິຫານ

## ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007

### ມາດຕາ 108. ສິດ ແລະ ໜ້າທີ່ ຂອງໜ່ວຍງານປ່າໄມ້ບ້ານ

ໃນການຄຸ້ມຄອງປ່າໄມ້, ທີ່ດິນປ່າໄມ້ ແລະ ກິດຈະການປ່າໄມ້ ໜ່ວຍງານປ່າໄມ້ບ້ານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີໃຫ້ອົງການປົກຄອງບ້ານ ອອກກົດລະບຽບການນຳໃຊ້ປ່າໄມ້ ຂັ້ນບ້ານ ຕາມປະເພນີ ໂດຍສອດຄ່ອງກັບລະບຽບກົດໝາຍກ່ຽວກັບປ່າໄມ້;
2. ເຜີຍແຜ່ລະບຽບການກ່ຽວກັບປ່າໄມ້ ເປັນຕົ້ນ ຄວາມສຳຄັນ ແລະ ຄຸນປະໂຫຍດຂອງປ່າໄມ້, ທີ່ດິນປ່າໄມ້, ປ່າຍອດນ້ຳ ແລະ ສິ່ງແວດລ້ອມ ໃຫ້ປະຊາຊົນ ໃນບ້ານຂອງຕົນ;
3. ຈັດຕັ້ງປະຊາຊົນ ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້, ປ່າຍອດນ້ຳ, ເຄື່ອງປ່າຂອງດົງ ແລະ ສິ່ງແວດລ້ອມ ພາຍໃນບ້ານ ໃຫ້ຖືກຕ້ອງກັບສະພາບຕົວຈິງຂອງບ້ານຕົນ;
4. ຕິດຕາມ, ເກັບກຳສະພາບການປ່ຽນແປງ ຂອງປ່າໄມ້, ສິ່ງແວດລ້ອມ ແລະ ສະພາບການເຄື່ອນໄຫວວຽກງານປ່າໄມ້ ໃນຂອບເຂດບ້ານຂອງຕົນ ແລ້ວລາຍງານ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ;
5. ເປັນເຈົ້າການຕິດຕາມ, ສະກັດກັ້ນ ແລະ ຕ້ານການເຄື່ອນໄຫວ ອັນບໍ່ດີທີ່ມີຜົນກະທົບ ຕໍ່ປ່າໄມ້, ເຄື່ອງປ່າຂອງດົງ, ປ່າຍອດນ້ຳ ແລະ ສິ່ງແວດລ້ອມ ເຊັ່ນ: ການລັກລອບຕັດໄມ້, ຈູດປ່າ ແລະ ການກະທຳ ທີ່ເປັນການທຳລາຍປ່າໄມ້ ຢ່າງທັນການ;
6. ສະຫຼຸບ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານປ່າໄມ້ພາຍໃນບ້ານ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ ແລະ ອົງການປົກຄອງບ້ານ ຢ່າງເປັນປົກກະຕິ.

ຮ່ວມສະໜັບສະໜູນໂດຍ